ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ
ພະແນກສາທາລະນະສຸກ
ຄະນະກຳມະການຊື້ນຳລວມ ຈັດຊື້-ຈັດຈ້າງ
ດ້ວຍທຶນຂອງລັດ, ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ

ເລກທີ 1117 /ສທນວ
ນະຄອນຫຼວງວຽງຈັນ, ວັນທີ 30 ຕຸລາ 2026

ໜັງສືແຈ້ງເຊີນ
ເຂົ້າຮ່ວມປະມູນແຂ່ງຂັນລາຄາ

ເຖິງ: ອຳນວຍການໂຮງງານ ແລະ ບໍລິສັດ ດ້ານຢາ ແລະ ຜະລິດຕະພັນການແພດ ຜ່ານການປະເມີນທາງດ້ານຄຸນນະວຸດທິ ສຳລັບການເຂົ້າຮ່ວມປະມູນຈັດຊື້ຮ່ວມກັນທົ່ວປະເທດ ປີ 2027.

ເລື່ອງ: ເຊີນເຂົ້າຮ່ວມປະມູນແຂ່ງຂັນລາຄາ ເພື່ອສະໜອງຢາປົວພະຍາດ, ເຄື່ອງໃຊ້ການແພດສິ້ນເປືອງ ແລະ ນ້ຳຢາເຄມີ ເຂົ້າໃນການປະມູນຈັດຊື້ຮ່ວມກັນ ປີ 2027.

- ອີງຕາມ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ. ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
- ອີງຕາມ ໜັງສືແຈ້ງການໃນການກະກຽມຈັດຕັ້ງປະຕິບັດການຈັດຊື້ ສະບັບເລກທີ 125/ຫກ, ລົງວັນທີ 28 ພຶດສະພາ 2026;
- ອີງຕາມ ໜັງສືແຈ້ງການກ່ຽວກັບລາຍຊື່ໂຮງງານ ແລະ ບໍລິສັດທີ່ຜ່ານ ແລະ ບໍ່ຜ່ານການປະເມີນທາງດ້ານຄຸນນະວຸດທິ ສຳລັບການເຂົ້າຮ່ວມປະມູນຈັດຊື້-ສະໜອງ ຢາປົວພະຍາດ, ເຄື່ອງໃຊ້ການແພດສິ້ນເປືອງ, ນ້ຳຢາເຄມີ ແລະ ລົມອົກຊີແຊນ ປີ 2027. ສະບັບເລກທີ 3919/ກອຍ ລົງວັນທີ 31 ກໍລະກົດ 2026 ແລະ ສະບັບເລກທີ 3900/ກອຍ, ລົງວັນທີ 14 ຕຸລາ 2026;
- ອີງຕາມ ໜັງສືຂໍອະນຸມັດຈັດຊື້ຮ່ວມກັນ ຢາປົວພະຍາດ, ເຄື່ອງໃຊ້ການແພດສິ້ນເປືອງ ແລະ ນ້ຳຢາເຄມີ ສຳລັບໂຮງໝໍ 09 ເມືອງນະຄອນຫຼວງວຽງຈັນ ປີ 2027;
- ອີງຕາມ ແຜນຄວາມຕ້ອງການ ຢາປົວພະຍາດ, ອຸປະກອນສິ້ນເປືອງ ແລະ ນ້ຳຢາເຄມີ ຫ້ອງການສາທາລະນະສຸກ 09 ເມືອງ ນະຄອນຫຼວງວຽງຈັນ ປະຈຳປີ 2027.

ຄະນະຮັບຜິດຊອບຊື້ນຳລວມ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດແຈ້ງມາຍັງທ່ານ ຜູ້ອຳນວຍການ ໂຮງງານ ແລະ ບໍລິສັດ ດ້ານຢາ ແລະ ຜະລິດຕະພັນການແພດ ສຳລັບການເຂົ້າຮ່ວມປະມູນຈັດຊື້ຮ່ວມກັນທົ່ວປະເທດ ປີ 2027 ຊາບວ່າ:

1. ພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ ຈະໄດ້ປະມູນແຂ່ງຂັນລາຄາ ເພື່ອສະໜອງ ຢາປົວພະຍາດ, ເຄື່ອງມືການແພດ ສິ້ນເປືອງ ແລະ ນ້ຳຢາເຄມີ ໃຫ້ແກ່ຫ້ອງການສາທາລະນະສຸກ 09 ເມືອງ ປີ 2027 ເຊິ່ງໄດ້ແບ່ງອອກເປັນ 04 ພຸດ ລາຍລະອຽດມີດັ່ງນີ້:
   - 1.1 ຢາປົວພະຍາດຜະລິດພາຍໃນ;
   - 1.2 ຢາປົວພະຍາດນຳເຂົ້າ;
   - 1.3 ເຄື່ອງໃຊ້ການແພດສິ້ນເປືອງ;

Scanned with CamScanner

1.4 ນ້ຳຢາເຄມີ;

2 ການປະມູນດັ່ງກ່າວ ຈະດຳເນີນໃນຮູບແບບການປະມູນເປີດກວ້າງທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017; ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າ ດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019 ແລະ ຂໍ້ຕົກລົງວ່າດ້ວຍ ການຈັດຊື້-ຈັດຈ້າງ ສິນຄ້າປະເພດຢາ, ຜະລິດຕະພັນການແພດ ແລະ ການບໍລິການ ດ້ວຍທຶນຂອງລັດ ສະບັບເລກທີ 1931/ ສທ, ລົງວັນທີ 11 ກໍລະກົດ 2022. ພ້ອມນີ້ການປະມູນຈະໄດ້ດຳເນີນການໃຊ້ລະບົບ ເອເລັກໂທຣນິກ E-Procurement ເຂົ້າໃນການປະມູນໃນຄັ້ງນີ້, ໃນຂັ້ນຕອນນີ້ຈະມີແຕ່ໂຮງງານ ແລະ ບໍລິສັດ ທີ່ໄດ້ຖືກຮັບຮອງເປັນ ໂຮງງານ ແລະ ບໍລິສັດທີ່ຜ່ານ ຄຸນນະວຸດທິຢ່າງຄົບຖ້ວນເທົ່ານັ້ນ, ໃນຂັ້ນຕອນນີ້ຈະມີແຕ່ ໂຮງງານ ແລະ ບໍລິສັດ ທີ່ໄດ້ຖືກຮັບຮອງທາງດ້ານຄຸນນະວຸດທິຢ່າງ ຄົບຖ້ວນເທົ່ານັ້ນ ຈຶ່ງຈະຖືກເຊີນເຂົ້າຮ່ວມແຂ່ງຂັນລາຄາໄດ້;

3 ໂຮງງານ ແລະ ບໍລິສັດ ທີ່ຜ່ານ ແລະ ຖືກຮັບຮອງທາງດ້ານຄຸນນະວຸດທິ ໃນປີ 2027 ສາມາດຕິດຕໍ່ພົວພັນຊື້ເອົາເອກະສານ ປະມູນຄົບຊຸດທີ່ເປັນພາສາລາວ ຜ່ານການດາວໂຫຼດໄດ້ໃນລະບົບ ເອເລັກໂທຣນິກ E-Procurement ໂດຍການນຳໃຊ້ ລະຫັດຢຸເຊີ ຂອງແຕ່ລະບໍລິສັດທີ່ສະໜອງໃຫ້. ຜູ້ປະມູນທີ່ສົນໃຈ ແມ່ນໃຫ້ຍື່ນໜັງສືສະເໜີຫາຂະແໜງອາຫານ ແລະ ຢາ ບ້ານທາດຫຼວງກາງ, ຖະໜົນສີສັງວອນ, ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ ເບີໂທ 020 55420464, 020 52595966, ຊື້ເອກະສານປະມູນໄດ້ຕາມທີ່ຢູ່ຂ້າງເທິງ ໃນເວລາລັດຖະການເລີ່ມແຕ່ວັນທີ 02 ພະຈິກ 2026 ເປັນຕົ້ນໄປ, ໃນລາຄາພຸດລະ 1,000,000 ກີບ (ໜຶ່ງລ້ານກີບ) ແລະ ວິທີການຊຳລະຕ້ອງຈ່າຍເປັນເງິນສົດ;

4 ເອກະສານຄົບຊຸດທັງໝົດຈາກລະບົບເອເລັກໂທຣນິກ E-Procurement ໄປປະກອບຕາມເງື່ອນໄຂທີ່ໄດ້ລະບຸໄວ້ໃນເອະ ການສານປະມູນ ແລະ ເງື່ອນໄຂໃນໜັງສືແຈ້ງເຊີນເຂົ້າຮ່ວມປະມູນ.ພາຍຫຼັງປະກອບເອກະສານປະມູນສຳເລັດໃຫ້ຜູ້ເຂົ້າຮ່ວມ ປະມູນອັບໂຫຼດເອກະສານປະມູນເຂົ້າໃນລະບົບເອເລັກໂທຣນິກ E-Procurement/ສົ່ງເອກະສານການເຂົ້າຮ່ວມປະມູນຈັດ ຊື້ຜ່ານລະບົບເອເລັກໂທຣນິກ E-Procurement ພ້ອມດຽວກັນນັ້ນໂຮງງານ, ບໍລິສັດ ຕ້ອງປະກອບເປັນປຶ້ມເອະສານຍື່ນ ປະມູນ ສະບັບຕົ້ນ 01 ຊຸດ ແລະ ສະບັບກອບປີ 01 ຊຸດຖືມາສະແດງໃນມື້ເປີດຊອງປະມູນ. ສຳລັບການປະມູນເອກະສານ ປະມູນໃດທີ່ບໍ່ໄດ້ອັບໂຫຼດຜ່ານລະບົບເອເລັກໂທຣນິກ E-Procurement ແມ່ນຈະຖືກປະຕິເສດໂດຍບໍ່ມີເງື່ອນໄຂ;

5 ຊອງປະມູນ ແລະ ຂໍ້ມູນອັບໂຫຼດເອກະສານປະມູນເຂົ້າໃນ ເອເລັກໂທຣນິກ E-Procurement ຕ້ອງສົ່ງກ່ອນເວລາ 09:00 ໂມງ ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 09:00 ໂມງ ຂອງວັນພຸດ ວັນທີ 03 ທັນວາ 2026. ທີ່ ຫ້ອງປະຊຸມພະແນກ ສາທາລະນະສຸກ ນະຄອນຫຼວງວຽງຈັນ ຊັ້ນ 3, ບ້ານນາຄວາຍກາງ, ຖະໜົນ ນາຄວາຍ, ເມືອງໄຊເສດຖາ, ນະຄອນຫຼວງວຽງ ຈັນ ຊອງໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ ໂດຍຊ້ອງໜ້າຄະນະກຳມະ ການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ;

6 ເອກະສານປະມູນຕ້ອງໄດ້ປະກອບໜັງສືຄ້ຳປະກັນການປະມູນໂດຍການຢັ້ງຢືນ ແລະ ຮັບຜິດຊອບຕໍ່ໜ້າກົດໝາຍ ໃນສິ່ງທີ່ ສະເໜີມາ ໃນລາຄາ ແລະ ເງື່ອນໄຂປະມູນ. ນັບແຕ່ມື້ເປີດຊອງວັນທີ 03 ທັນວາ 2026 ເປັນຕົ້ນໄປ ແລະ ມີອາຍຸເພີ່ມອີກ 28 ວັນ.

ຫົວໜ້າພະແນກ

ຄະນະຊີ້ນຳລວມ ການຈັດຊື້-ຈັດຈ້າງ

ດ້ວຍທຶນຂອງລັດ,ທຶນກູ້ຢືມ ແລະ ຊ່ວຍເຫຼືອລ້າ

ດຣ. ໄຊພອນ ນັນທະພອນ

ຕິດຕໍ່ພົວພັນ

- ດຣ ຄຳພຸ ຈັນທະປານີ 55420464
- ນາງ ທອດດາວ ພິມມະວົງ 52595966

Scanned with CamScanner